**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ຂໍ້ແນະນຳ

# ເຕັກນິກການປູກໝາກຖົ່ວຍັດ



ເອກະສານ ປະກອບການຝຶກອົບຮົມ 19:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂື້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບົ່ວກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຍອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 19 :
# ແນະນຳເຕັກນິກການປູກໝາກຖົ່ວຍັດ

## ສາລະບານ

ຖົ່ວຍັດ (Sugar pea)........ 2
ລັກສະນະທົ່ວໄປ ........ 2
ພັນທີ່ໃຊ້ປູກ ........ 3
ການກຽມໝານປູກ ........ 3
ການປູກ ........ 3
ການບົວລະບັດຮັກສາ ........ 4
ການເກັບກ່ຽວ ........ 5

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້

ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

## ການເກັບກ່ຽວ

ອາຍຸການເກັບກ່ຽວແຕ່ລະພັນບໍ່ຄືກັນ ແຕ່ໂດຍທົ່ວໄປແລ້ວປະມານ 80 ຫາ 90 ມື້ ຫຼັງ ຈາກປູກ. ການເກັບໝາກສົດຄວນເກັບທຸກໆ 3 ຫາ 4 ວັນ ເກັບໄປເລື້ອຍໆ. ເລືອກເກັບໝາກທີ່ໄດ້ຂະໜາດອ່ອນນຸ້ມກອບເມັດຂ້າງໃນອ່ອນ. ອາຍຸການເກັບກ່ຽວປະມານ 30 ຫາ 60 ມື້ (ຕັ້ງແຕ່ເລີ່ມຕົ້ນເກັບຈົນເກັບເທື່ອສຸດທ້າຍ).



# ຂໍ້ແນະນຳເຕັກນິກການປູກໝາກຖົ່ວຍັດ



## ຖົ່ວຍັດ (Sugar pea)

ໝາກຖົ່ວຍັດເປັນພືດຜັກ ທີ່ບໍລິໂພກໃນບ້ານເຮົາຫຼາຍພໍສົມຄວນ ແຕ່ບໍ່ມີການປູກຫຼາຍເທົ່າໃດ ມີຈຳນວນນ້ອຍທີ່ຂາຍໃນທ້ອງຕະຫຼາດອາດຈະເປັນເພາະວ່າຖົ່ວຍັດເປັນພືດປູກຍາກພໍສົມຄວນ ຮຽກຮ້ອງເຖິງການບົວລະບັດຮັກສາດີເອົາໃຈໃສ່ດູແລໃຫ້ຫຼາຍ.

## ລັກສະນະທົ່ວໄປ

ຖົ່ວຍັດ ເປັນພືດທີ່ຢູ່ໃນຕະກຸນ Leguminoseae ມີຊື່ທາງວິທະຍາສາດວ່າ Pisum sativum Linn. Var. saccharatum ເປັນພືດປະເພດຜັກອາຍຸປີດຽວ (Annual). ລຳຕົ້ນຈະເລືອຂຶ້ນຄ້າງໄປໂດຍໃຊ້ມືຈັບ. ເປັນພືດຜັກທີ່ມັກອາກາດເຢັນຈຶ່ງປູກໄດ້ດີ ໃນຊ່ວງລະດູໜາວ. ແຕ່ຢ່າງໃດກໍ່ຕາມຖົ່ວຍັດກໍສາມາດຂຶ້ນໄດ້ໃນດິນເກືອບທຸກຊະນິດ ໂດຍສະເພາະດິນ

ໜຽວ ແລະຄວນເປັນດິນ ຂ້ອນຂ້າງມີຄວາມເປັນກົດເລັກນ້ອຍ.

## ພັນທີ່ໃຊ້ປູກ

ພັນທີ່ນິຍົມໃຊ້ປູກໃນບ້ານເຮົາຄື ພັນພື້ນເມືອງ

## ການຕຽມໜານປູກ

ຂຸດໄຖດິນໃຫ້ເລິກປະມານ 25 ຫາ 30 ຊຕມ. ຕາກດິນໄວ້ປະມານ 7 ຫາ 10 ວັນ ແລ້ວ ໃສ່ຝຸ່ນຄອກ ຫຼືຝຸ່ນບົ່ມ ເພື່ອໃຫ້ດິນມີຄວາມຜຸຜົງ ແລະ ລະບາຍນ້ຳດີຂື້ນ. ຈາກນັ້ນຕ້ອງຍ່ອງດິນ ຫຼືພວນດິນໃຫ້ລະອຽດ. ຖ້າດິນເປັນກົດເກີນໄປຄວນໃສ່ປູນຂາວ ເພື່ອລຸດຜ່ອນຄວາມເປັນກົດລົງ.

## ການປູກ

ໃຊ້ໄລຍະລະຫວ່າງຕົ້ນ/ຕົ້ນ 30 ຫາ 40 ຊຕມ. ແລະແຖວ/ແຖວ 70 ຫາ 80 ຊຕມ. ຫຼັງຈາກປູກແລ້ວປົກດ້ວຍດິນລະອຽດ ຫຼືຝຸ່ນຄອກ ຫຼື ຝຸ່ນບົ່ມບາງໆ ແລ້ວຫົດນ້ຳໃຫ້ຊຸ່ມ. ຫຼັງຈາກຖົ່ວຍັດງອກຈົນມີໃບແທ້ 2 ໃບຄວນຖອນແຍກໃຫ້ເຫຼືອຂຸມລະ 2 ຕົ້ນ. ເມື່ອຕົ້ນຖົ່ວອາຍຸໄດ້ 15 ຫາ 20 ມື້ ຈະເລີ່ມມີເກາະຄວນເຮັດຄ້າງເພື່ອໃຫ້ຖົ່ວຍັດເລືອ.



## ການບົວລະບັດຮັກສາ

### ການໃສ່ຝຸ່ນ

ຝຸ່ນທີ່ແນະນຳໃຫ້ໃສ່ ຄືຝຸ່ນເຄມີ ສູດ 10_20_10 ຫຼື 15_15_15 ຫຼື 13_13_21 ຫຼື ສູດອື່ນໆ ທີ່ໃກ້ຄຽງກັນນີ້. ໃສ່ຈຳນວນ 300 ຫາ 500 ກລ/ຮຕ ຂື້ນຢູ່ກັບຄວາມອຸດົມສົມບູນຂອງດິນ. ການໃສ່ຝຸ່ນ ເທື່ອທີ່ 1 ໃສ່ເປັນຝຸ່ນຮອງພື້ນກ່ອນປູກ, ເທື່ອທີ 2 ໃສ່ຫຼັງ ຈາກປູກໄດ້ 25 ຫາ 30 ວັນ ໂຮຍຂ້າງຫ່າງຈາກຕົ້ນເລັກນ້ອຍພວນດິນປົກຫຼັງຈາກປູກ ໂດຍໃສ່ແບບໂຮຍຂ້າງຕົ້ນກ່ອນ ແລ້ວພວນດິນປົກ.

### ການໃຫ້ນ້ຳ

ຄວນໃຫ້ສະໝ່ຳສະເໝີ ແລະພຽງພໍບໍ່ຄວນໃຫ້ຂາດນ້ຳໃນໄລຍະກຳລັງອອກດອກ ແລະ ຈັບໝາກ.

### ການພວນດິນ ແລະກຳຈັດຫຍ້າ

ຄວນເຮັດເລື້ອຍໆໃນໄລຍະທຳອິດ ແລະຕ້ອງເຮັດຢ່າງລະມັດລະວັງຢ່າໃຫ້ກະທົບກະເທືອນເຖິງລະບົບຮາກການຈະເລີນເຕີບໂຕຈະຊ້າ.